ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 155 /ພກພ
ນະຄອນຫຼວງວຽງຈັນ, ວັນທີ: 27/02/2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ);
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ການແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ I ປີ 2025 (BOD I).

- ອີງຕາມຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ຄັ້ງທີ I ປີ 2025 ເຊິ່ງໄດ້ຈັດຂຶ້ນໃນວັນທີ 27 ກຸມພາ 2025, ເວລາ 14:00 ໂມງ ທີ່ຊັ້ນ 3 ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ປອ ສີທອງ ພົມມະຈິດ ພ້ອມດ້ວຍສະມາຊິກສະພາບໍລິຫານ ດັ່ງນີ້:

1. ທ່ານ ປອ ສີທອງ ພົມມະຈິດ : ປະທານສະພາບໍລິຫານ
2. ທ່ານ ສີທາ ພົມມະຈິດ : ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ : ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
4. ທ່ານ ນັນທະລັດ ທິລະກຸນ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
5. ທ່ານ ນາງ ໄຮທອງ ພົມມະຈິດ : ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ຝ່າຍບັນຊີການເງິນ
6. ທ່ານ ພູມສະຫວັນ ສຸນັນທອງ : ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການຝ່າຍພັດທະນາທຸລະກິດ
7. ທ່ານ ພຸດທະເສນ ພົມມີໄຊ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ

ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນເອກະພາບກັນດັ່ງນີ້:

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນ ປະຈຳປີ 2024 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

2. ຮັບຮອງການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2024 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
4. ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2025 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
5. ກຳນົດເອົາວັນທີ 18 ມີນາ 2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024;
6. ກຳນົດວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໃນວັນທີ 25 ເມສາ 2025, ເວລາ 09:00 ໂມງ ໂດຍຈັດທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ;
7. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024, ມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023;
ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນ ປະຈຳປີ 2024 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;
ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2024;
ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025;
ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2025.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ປອ ສິທອງ ພົມມະຈິດ

 ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com